# Microsoft License Terms

**ອັບເດດຫຼ້າສຸດ ທັນວາ 2016**

**ຂໍ້ກຳນົດການອະນຸຍາດຊອບແວ Microsoft**

**ລະບົບປະຕິບັດງານຂອງ WINDOWS**

---

**ຖ້າທ່ານຢູ່ໃນ (ຫຼື ບ່ອນດຳເນີນທຸລະກິດຕົ້ນຕໍຂອງທ່ານຢູ່ໃນ) ສະຫະລັດ, ກະລຸນາອ່ານຂໍ້ໄກ່ເກ່ຍຜູກພັນ ແລະ ການສະຫຼະສິດການດຳເນີນການຕາມຂັ້ນຢູ່ໃນພາກທີ 10. ມັນມີຜົນກະທົບຢູ່ບ່ອນວ່າ ຂໍ້ຂັດແຍ້ງຈະໄດ້ຮັບການແກ້ໄຂແນວໃດ.**

**ຂອບໃຈທີ່ເລືອກໃຊ້ Microsoft!**

ຂຶ້ນຢູ່ກັບວ່າ ທ່ານໄດ້ຊອບແວ Windows ມາແນວໃດ, ນີ້ແມ່ນຂໍ້ຕົກລົງໃບອະນຸຍາດລະຫວ່າງ (i) ທ່ານ ແລະ ຜູ້ຜະລິດອຸປະກອນ ຫຼື ຜູ້ຕິດຕັ້ງຊອບແວ ທີ່ເຜີຍແຜ່ຊອບແວມາກັບອຸປະກອນຂອງທ່ານ; ຫຼື (ii) ທ່ານ ແລະບໍລິສັດ Microsoft Corporation (ຫຼື, ອີງຕາມບ່ອນທີ່ທ່ານຢູ່ ຫຼືຖ້າທຸລະກິດຕັ້ງຢູ່ໃນບ່ອນດຳເນີນທຸລະກິດຕົ້ນຕໍຂອງທ່ານ, ໜຶ່ງໃນຫຸ້ນສ່ວນ) ຖ້າທ່ານໄດ້ຊອບແວມາຈາກຜູ້ຂາຍຍ່ອຍ. Microsoft ເປັນຜູ້ຜະລິດອຸປະກອນສຳລັບອຸປະກອນທີ່ຜະລິດຂຶ້ນໂດຍ Microsoft ຫຼື ໜຶ່ງໃນຫຸ້ນສ່ວນ, ແລະ Microsoft ແມ່ນຜູ້ຂາຍຍ່ອຍ ຖ້າທ່ານໄດ້ຊອບແວມາຈາກ Microsoft ໂດຍກົງ.

ຂໍ້ຕົກລົງນີ້ອະທິບາຍສິດຂອງທ່ານ ແລະ ເງື່ອນໄຂຕາມທີ່ທ່ານອາດຈະນຳໃຊ້ຊອບແວ Windows. ທ່ານຄວນຈະທົບທວນເບິ່ງຂໍ້ຕົກລົງທັງໝົດ, ລວມທັງຂໍ້ກຳນົດໃບອະນຸຍາດເສີມໃຫ້ມາພ້ອມກັບຊອບແວ ແລະ ຂໍ້ກຳນົດທີ່ລິ້ງແລ້ວໃດໜຶ່ງ, ເພາະວ່າທຸກຂໍ້ກຳນົດມີຄວາມສຳຄັນ ແລະ ລວມເຂົ້າກັນເປັນຂໍ້ຕົກລົງທີ່ນຳໃຊ້ກັບທ່ານ. ທ່ານສາມາດທົບທວນເບິ່ງຂໍ້ກຳນົດທີ່ລິ້ງແລ້ວໄດ້ ໂດຍການແປະລິ້ງ (aka.ms/) ໃສ່ໃນໜ້າຕ່າງບຣາວເຊີ.

**ໂດຍການຍອມຮັບຂໍ້ຕົກລົງນີ້ ຫຼື ໂດຍການໃຊ້ຊອບແວ, ທ່ານເຫັນດີກັບທຸກຂໍ້ກຳນົດເຫຼົ່ານີ້, ແລະ ຍິນຍອມຕໍ່ການສົ່ງຂໍ້ມູນສະເພາະໃນລະຫວ່າງການເປີດນຳໃຊ້ ແລະ ໃນລະຫວ່າງການໃຊ້ຊອບແວຂອງທ່ານຕາມຂໍ້ກຳນົດຄວາມເປັນສ່ວນຕົວທີ່ໄດ້ອະທິບາຍໄວ້ຢູ່ໃນພາກທີ 3. ຖ້າທ່ານບໍ່ຍອມຮັບ ແລະ ປະຕິບັດຕາມຂໍ້ກຳນົດເຫຼົ່ານີ້, ທ່ານອາດຈະບໍ່ນຳໃຊ້ຊອບແວ ຫຼື ຄຸນສົມບັດຂອງມັນໄດ້.** ທ່ານອາດຈະຕິດຕໍ່ກັບຜູ້ຜະລິດ ຫຼື ຜູ້ຕິດຕັ້ງອຸປະກອນ, ຫຼື ຜູ້ຂາຍຍ່ອຍຂອງທ່ານ ຖ້າທ່ານຊື້ຊອບແວໂດຍກົງ, ເພື່ອກຳນົດນະໂຍບາຍການສົ່ງຂອງມັນ ແລະ ສົ່ງຊອບແວ ຫຼື ອຸປະກອນຄືນ ເພື່ອຂໍເງິນ ຫຼື ເຄຣດິດຄືນພາຍໃຕ້ນະໂຍບາຍນັ້ນ. ທ່ານຕ້ອງປະຕິບັດຕາມນະໂຍບາຍນັ້ນ, ເຊິ່ງອາດຈະຕ້ອງໃຫ້ທ່ານສົ່ງຊອບແວຄືນພ້ອມກັບອຸປະກອນທັງໝົດທີ່ໄດ້ຕິດຕັ້ງຊອບແວໃສ່ ເພື່ອສົ່ງເງິນ ຫຼື ເຄຣດິດຄືນ, ຖ້າມີ.

**1.ສະພາບລວມ.**

**a.ການນຳໃຊ້.** ຂໍ້ຕົກລົງນີ້ນຳໃຊ້ກັບຊອບແວ Windows ທີ່ຕິດຕັ້ງຢູ່ໃນອຸປະກອນຂອງທ່ານມາກ່ອນ, ຫຼື ໄດ້ມາຈາກຜູ້ຂາຍຍ່ອຍ ແລະ ທ່ານຕິດຕັ້ງເອງ, ມີເດຍທີ່ທ່ານໄດ້ຮັບຊອບແວ (ຖ້າມີ), ແບບຕົວໜັງສືໃດໜຶ່ງ, ໄອ

ຄອນ, ຮູບ ຫຼື ໄຟລ໌ສຽງທີ່ລວມຢູ່ກັບຊອບແວ, ແລະ ການອັບເດດ, ການອັບເກຣດ, ການເສີມ ຫຼື ການບໍລິການໃດໜຶ່ງຂອງ Microsoft ສໍາລັບຊອບແວ, ນອກຈາກວ່າມີຂໍ້ກໍານົດອື່ນມາພ້ອມກັບມັນ. ມັນຍັງນໍາໃຊ້ກັບແອັບWindows ທີ່ພັດທະນາຂຶ້ນມາໂດຍ Microsoft ທີ່ໃຫ້ໃຊ້ງານໄດ້ເຊັ່ນ ເມວ, ລາຍຊື່, ເພງ, ແລະຮູບທີ່ລວມເຂົ້າໄວ້ກັບ ແລະ ເປັນສ່ວນໜຶ່ງຂອງ Windows. ຖ້າຂໍ້ຕົກລົງນີ້ມີຂໍ້ກໍານົດກ່ຽວກັບຄຸນສົມບັດ ຫຼື ການບໍລິການທີ່ບໍ່ມີໃຫ້ຢູ່ເທິງອຸປະກອນຂອງທ່ານ, ຂໍ້ກໍານົດເຫຼົ່ານັ້ນຈະບໍ່ນໍາໃຊ້.

**b.ຂໍ້ກໍານົດເພີ່ມເຕີມ.** ອາດຈະນໍາໃຊ້ຂໍ້ກໍານົດເພີ່ມເຕີມຂອງ Microsoft ແລະ ບຸກຄົນທີສາມໃສ່ການນໍາໃຊ້ຄຸນສົມບັດ, ການບໍລິການ ແລະ ແອັບສະເພາະຂອງທ່ານ, ຂຶ້ນກັບຄວາມອາດສາມາດຂອງອຸປະກອນຂອງທ່ານ, ມັນຖືກກໍານົດຕັ້ງແນວໃດ, ແລະ ທ່ານໃຊ້ມັນແນວໃດ. ກະລຸນາອ່ານໃຫ້ລະອຽດ.

(i) ແອັບຂອງ Windows ບາງອັນໃຫ້ຈຸດເຂົ້າຫາ, ຫຼື ອາໄສການບໍລິການອອນລາຍ ແລະການໃຊ້ບໍລິການເຫຼົ່ານັ້ນແມ່ນບາງຄັ້ງມີຂໍ້ກໍານົດ ແລະ ນະໂຍບາຍຄວາມເປັນສ່ວນຕົວຄຸ້ມຄອງຕ່າງຫາກ, ເຊັ່ນ ຂໍ້ຕົກລົງການບໍລິການຂອງ Microsoft ຢູ່ທີ່ (aka.ms/msa). ທ່ານສາມາດເບິ່ງຂໍ້ກໍານົດແລະ ນະໂຍບາຍເຫຼົ່ານີ້ໄດ້ ໂດຍການເບິ່ງຂໍ້ກໍານົດການບໍລິການວ່າດ້ວຍການນໍາໃຊ້ ຫຼື ການຕັ້ງຄ່າຂອງແອັບ, ຕາມທີ່ນໍາໃຊ້ໄດ້. ການບໍລິການອາດຈະບໍ່ມີໃຫ້ຢູ່ໃນທຸກພາກພື້ນ.

(ii) Microsoft, ຜູ້ຜະລິດ ຫຼື ຜູ້ຕິດຕັ້ງຍັງອາດຈະລວມມີແອັບເພີ່ມເຕີມ, ເຊິ່ງຈະມີຂໍ້ກໍານົດໃບອະນຸຍາດ ແລະ ນະໂຍບາຍວ່າດ້ວຍຄວາມເປັນສ່ວນຕົວແຍກຕ່າງຫາກ.

(iii) ຊອບແວລວມມີ Adobe Flash Player ທີ່ໄດ້ຮັບອະນຸຍາດພາຍໃຕ້ຂໍ້ກໍານົດຈາກບໍລິສັດ Adobe Systems Incorporated ຢູ່ທີ່ (aka.ms/adobeflash). Adobe ແລະ Flash ແມ່ນເຄື່ອງໝາຍການຄ້າຈົດທະບຽນ ຫຼື ເຄື່ອງໝາຍການຄ້າຂອງ Adobe Systems Incorporated ຢູ່ໃນສະຫະລັດ ແລະ/ຫຼືປະເທດອື່ນໆ.

(iv) ຊອບແວອາດຈະລວມມີໂປຣແກຣມຂອງບຸກຄົນທີສາມ ທີ່ໄດ້ໃຫ້ການອະນຸຍາດແກ່ທ່ານພາຍໃຕ້ຂໍ້ຕົກລົງນີ້, ຫຼື ຂໍ້ກໍານົດຂອງພວກມັນ.ຖ້າຫາກວ່າມີຂໍ້ກໍານົດການອະນຸຍາດ, ແຈ້ງການ ແລະ ການຮັບຮູ້ສໍາລັບໂປຣແກຣມບຸກຄົນທີສາມແມ່ນສາມາດເຂົ້າເບິ່ງໄດ້ຢູ່ທີ່ (aka.ms/thirdpartynotices).

(v) ໃນລະດັບທີ່ເອົາລວມເຂົ້າກັນກັບ Windows, Word, Excel, PowerPoint, ແລະ OneNote ອະນຸຍາດໃຫ້ທ່ານໃຊ້ສ່ວນຕົວ, ບໍ່ແມ່ນທາງການຄ້າ, ນອກຈາກວ່າ ທ່ານມີສິດການນໍາໃຊ້ທາງການຄ້າພາຍໃຕ້ຂໍ້ຕົກລົງສະບັບແຍກຕ່າງຫາກ.

**2.ສິດການຕິດຕັ້ງ ແລະການນໍາໃຊ້.**

**a.ໃບອະນຸຍາດ.** ຊອບແວແມ່ນການອະນຸຍາດໃຫ້, ບໍ່ໄດ້ຂາຍ. ພາຍໃຕ້ຂໍ້ຕົກລົງນີ້, ພວກເຮົາໃຫ້ສິດທ່ານຕິດຕັ້ງ ແລະ ໃຊ້ງານຊອບແວອັນໜຶ່ງຢູ່ໃນອຸປະກອນຂອງທ່ານ (ອຸປະກອນທີ່ໄດ້ຮັບອະນຸຍາດ), ສໍາລັບໃຫ້ບຸກຄົນໜຶ່ງໃຊ້ໃນເວລາໃດໜຶ່ງ, ໄປໄດ້ຕາບເທົ່າທີ່ທ່ານປະຕິບັດຕາມທຸກຂໍ້ກໍານົດຂອງຂໍ້ຕົກລົງນີ້. ການອັບເດດ ຫຼື ການອັບເກຣດຈາກຊອບແວທີ່ບໍ່ແມ່ນຂອງແທ້ດ້ວຍຊອບແວຈາກ Microsoft ຫຼື ແຫຼ່ງທີ່ບໍ່ໄດ້ຮັບອະນຸຍາດແມ່ນ

ຈະບໍ່ເຮັດໃຫ້ເວີຊັນເດີມຂອງທ່ານຫຼື ເວີຊັນອັບເດດ/ອັບເກຣດແລ້ວເປັນຂອງແທ້ໄດ້, ແລະ ຢູ່ໃນສະຖານະການນັ້ນ ທ່ານບໍ່ມີໃບອະນຸຍາດທີ່ຈະໃຊ້ຊອບແວໄດ້.

**b.ອຸປະກອນ.** ຢູ່ໃນຂໍ້ຕົກລົງນີ້, “ອຸປະກອນ” ໝາຍເຖິງລະບົບຮາດແວ (ບໍ່ວ່າຈະເປັນອັນແທ້ ຫຼືຈໍາລອງ) ທີ່ມີອຸປະກອນການຈັດເກັບຂໍ້ມູນພາຍໃນທີ່ມີຄວາມສາມາດແລ່ນຊອບແວໄດ້. ສ່ວນແຍກອັນໜຶ່ງ ຫຼື ໃບອັນໜຶ່ງກໍ່ຖືກພິຈາລະນາວ່າເປັນອຸປະກອນອັນໜຶ່ງ.

**c.ຂໍ້ຫ້າມ.** ຜູ້ຜະລິດ ຫຼື ຜູ້ຕິດຕັ້ງ ແລະ Microsoft ສະຫງວນລິຂະສິດ (ເຊັ່ນ ສິດພາຍໃຕ້ກົດໝາຍຊັບສິນທາງປັນຍາ) ບໍ່ໄດ້ສະແດງອອກຈະແຈ້ງຢູ່ໃນຂໍ້ຕົກລົງນີ້. ຕົວຢ່າງ, ໃບອະນຸຍາດນີ້ບໍ່ໃຫ້ສິດໃດກັບທ່ານເພື່ອ, ແລະ ທ່ານອາດຈະບໍ່:

(i) ໃຊ້ ຫຼື ດັດປັບຄຸນສົມບັດຕ່າງໆຂອງຊອບແວແຍກຕ່າງຫາກ;

(ii) ເຜີຍແຜ່, ອັດສໍາເນົາ (ນອກເໜືອໄປຈາກສໍາເນົາຕົວສໍາຮອງທີ່ໄດ້ຮັບອະນຸຍາດ), ເຊົ່າ, ໃຫ້ເຊົ່າ, ຫຼື ໃຫ້ຢືມຊອບແວ;

(iii) ໂອນຊອບແວ (ຍົກເວັ້ນແຕ່ທີ່ໄດ້ຮັບອະນຸຍາດຈາກຂໍ້ຕົກລົງນີ້);

(iv) ໃຊ້ງານໃນຂໍ້ຈໍາກັດ ຫຼື ຂອບເຂດຈໍາກັດທາງດ້ານເຕັກນິກໃດໜຶ່ງຢູ່ໃນຊອບແວ;

(v) ໃຊ້ຊອບແວເປັນຊອບແວເຊີບເວີ, ເພື່ອເປັນແມ່ຂ່າຍທາງການຄ້າ, ເຮັດໃຫ້ຫຼາຍຄົນໃຊ້ຊອບແວຢູ່ເທິງເຄືອຂ່າຍໄດ້ໃນເວລາດຽວກັນ, ຕິດຕັ້ງຊອບແວຢູ່ເທິງເຊີບເວີ ແລະ ອະນຸຍາດໃຫ້ຜູ້ໃຊ້ເຂົ້າຫາມັນໄດ້ຈາກທາງໄກ, ຫຼື ຕິດຕັ້ງຊອບແວຢູ່ໃນອຸປະກອນ ເພື່ອໃຫ້ແຕ່ຜູ້ໃຊ້ທາງໄກນໍາໃຊ້ເທົ່ານັ້ນ;

(vi) ການປີ້ນດ້ານວິສາວະກໍາ, ການຖອດແຍກ, ຫຼື ການມ້າງຊອບແວ, ຫຼືຄວາມພະຍາຍາມດໍາເນີນການດັ່ງກ່າວ, ຍົກເວັ້ນ ແລະ ພຽງແຕ່ໃນລະດັບທີ່ຂໍ້ຫ້າມກ່າວມາກ່ອນນັ້ນ (ກ) ໄດ້ຮັບອະນຸຍາດຕາມກົດໝາຍ; (b) ໄດ້ຮັບອະນຸຍາດຕາມຂໍ້ກໍານົດການອະນຸຍາດຄຸ້ມຄອງການນໍາໃຊ້ອົງປະກອບໂອເພນຊອດ ທີ່ອາດຈະລວມໄວ້ກັບຊອບແວ; ຫຼື (ຄ) ຈໍາເປັນຕ້ອງໄດ້ແກ້ໄຂການປ່ຽນແປງໃສ່ຫໍສະໝຸດໃດໜຶ່ງພາຍໃຕ້ການອະນຸຍາດ GNU Lesser General Public License ເຊິ່ງລວມເຂົ້າກັບ ແລະ ລິ້ງໃສ່ໂດຍຊອບແວ; ແລະ

(vii) ເມື່ອໃຊ້ຄຸນສົມບັດທີ່ຕ້ອງອາໄສອິນເຕີເນັດ, ທ່ານຈະຕ້ອງບໍ່ໃຊ້ຄຸນສົມບັດເຫຼົ່ານັ້ນໄປໃນທາງທີ່ສາມາດລົບກວນຜູ້ອື່ນທີ່ໃຊ້ພວກມັນ, ຫຼື ໃຊ້ເພື່ອພະຍາຍາມເຂົ້າຫາການບໍລິການໃດໜຶ່ງ, ຂໍ້ມູນ, ບັນຊີ ຫຼື ເຄືອຂ່າຍຢູ່ໃນຮູບແບບທີ່ບໍ່ໄດ້ຮັບອະນຸຍາດ.

**d.ພາບເຫດການຈໍາລອງການໃຊ້ຫຼາຍ.**

(i) **ຫຼາຍເວີຊັນ.** ຖ້າຊອບແວທີ່ທ່ານໄດ້ມານັ້ນມີຫຼາຍເວີຊັນ (ເຊັ່ນ ເວີຊັນ 32 ບິດ ແລະ 64 ບິດ), ທ່ານອາດຈະຕິດຕັ້ງ ແລະ ເປີດນໍາໃຊ້ພຽງແຕ່ເວີຊັນໜຶ່ງໃນຈໍານວນເວີຊັນເຫຼົ່ານັ້ນຢູ່ໃນເວລາໜຶ່ງເທົ່ານັ້ນ.

(ii) **ການເຊື່ອມຕໍ່ຫຼາຍອັນ ຫຼື ລວມກັນ.** ຮາດແວ ຫຼື ຊອບແວທີ່ທ່ານໃຊ້ກັບການເຊື່ອມຕໍ່ຫຼາຍດ້ານ ຫຼື ລວມກັນ, ຫຼື ຫຼຸດຈຳນວນອຸປະກອນ ຫຼື ຜູ້ໃຊ້ທີ່ເຂົ້າຫາ ຫຼື ໃຊ້ຊອບແວລົງ, ບໍ່ຫຼຸດຈຳນວນຂອງການອະນຸຍາດທີ່ທ່ານຕ້ອງການ. ທ່ານອາດຈະໃຊ້ຮາດແວ ຫຼືຊອບແວດັ່ງກ່າວພຽງແຕ່ຖ້າທ່ານມີໃບອະນຸຍາດສຳລັບຊອບແວແຕ່ລະອັນທີ່ທ່ານກຳລັງໃຊ້ຢູ່ເທົ່ານັ້ນ.

(iii) **ການເຊື່ອມຕໍ່ອຸປະກອນ.** ທ່ານອາດຈະອະນຸຍາດໃຫ້ອຸປະກອນອື່ນອີກ 20 ອັນເຂົ້າຫາຊອບແວທີ່ຕິດຕັ້ງໄວ້ຢູ່ໃນອຸປະກອນທີ່ໄດ້ຮັບອະນຸຍາດ ເພື່ອຈຸດປະສົງຂອງການໃຊ້ຄຸນສົມບັດຊອບແວຕໍ່ໄປນີ້ຄື: ການບໍລິການໄຟລ໌, ການບໍລິການພິມ, ການບໍລິການຂໍ້ມູນອິນເຕີເນັດ, ແລະ ການແບ່ງປັນການເຊື່ອມຕໍ່ອິນເຕີເນັດ ແລະ ການບໍລິການລະບົບໂທລະສັບຢູ່ໃນອຸປະກອນທີ່ໄດ້ຮັບອະນຸຍາດ. ທ່ານອາດຈະອະນຸຍາດໃຫ້ອຸປະກອນຈຳນວນໃດໜຶ່ງເຂົ້າຫາຊອບແວຢູ່ໃນອຸປະກອນທີ່ໄດ້ຮັບອະນຸຍາດ ເພື່ອຊິງໂຄຣໄນຂໍ້ມູນລະຫວ່າງອຸປະກອນ. ເຖິງແນວໃດກໍ່ຕາມ ໃນພາກນີ້ບໍ່ໄດ້ໝາຍຄວາມວ່າ ທ່ານມີສິດຕິດຕັ້ງຊອບແວ, ຫຼື ໃຊ້ຟັງຄ໌ຊັນຕົ້ນຕໍຂອງຊອບແວ (ນອກເໜືອໄປຈາກຄຸນສົມບັດທີ່ເຮັດເປັນລາຍການໄວ້ຢູ່ໃນພາກນີ້) ຢູ່ໃນອຸປະກອນອື່ນໃດໜຶ່ງເຫຼົ່ານີ້.

(iv) **ການໃຊ້ຢູ່ໃນສະພາບແວດລ້ອມຈຳລອງ.** ໃບອະນຸຍາດນີ້ອະນຸຍາດໃຫ້ທ່ານຕິດຕັ້ງພຽງແຕ່ໜຶ່ງຊອບແວສຳລັບໃຊ້ຢູ່ໃນໜຶ່ງອຸປະກອນເທົ່ານັ້ນ, ບໍ່ວ່າອຸປະກອນນັ້ນຈະເປັນອັນແທ້ ຫຼື ອັນຈຳລອງກໍ່ຕາມ. ຖ້າທ່ານຕ້ອງການໃຊ້ຊອບແວຢູ່ໃນອຸປະກອນຈຳລອງຫຼາຍກວ່າໜຶ່ງເຄື່ອງ, ທ່ານຕ້ອງໄດ້ມີການອະນຸຍາດແຍກຕ່າງຫາກສຳລັບແຕ່ລະອັນ.

(v) **ການເຂົ້າຫາຈາກທາງໄກ.** ບໍ່ເກີນກ່ວາຄັ້ງໜຶ່ງໃນທຸກໆ 90 ວັນ, ທ່ານອາດຈະກຳນົດຜູ້ໃຊ້ດ່ຽວ ຜູ້ທີ່ໃຊ້ອຸປະກອນຕົວຈິງເປັນຜູ້ໃຊ້ໄດ້ຮັບອະນຸຍາດ. ຜູ້ໃຊ້ທີ່ໄດ້ຮັບອະນຸຍາດອາດຈະເຂົ້າຫາອຸປະກອນທີ່ໄດ້ຮັບອະນຸຍາດຈາກອຸປະກອນອື່ນ ດ້ວຍການໃຊ້ເຕັກໂນໂລຊີການເຂົ້າຫາຈາກທາງໄກໄດ້. ຜູ້ໃຊ້ຄົນອື່ນອາດຈະເຂົ້າຫາອຸປະກອນທີ່ໄດ້ຮັບອະນຸຍາດຈາກອຸປະກອນອື່ນໃນເວລາອື່ນ ດ້ວຍການໃຊ້ເຕັກໂນໂລຊີການເຂົ້າຫາຈາກທາງໄກໄດ້, ແຕ່ວ່າມີພຽງແຕ່ຢູ່ໃນອຸປະກອນທີ່ໄດ້ຮັບການອະນຸຍາດແຍກຕ່າງຫາກເທົ່ານັ້ນທີ່ແລ່ນຊອບແວນີ້ເປັນສະບັບດຽວກັນ ຫຼື ສູງກ່ວາ.

(vi) **ການຊ່ວຍເຫຼືອທາງໄກ.** ທ່ານອາດຈະນຳໃຊ້ການຊ່ວຍເຫຼືອທາງໄກ ເພື່ອແບ່ງປັນການໃຊ້ທີ່ເປີດຢູ່ໂດຍບໍ່ຕ້ອງມີການອະນຸຍາດເພີ່ມເຕີມໃດໜຶ່ງສຳລັບຊອບແວໄດ້. ການຊ່ວຍເຫຼືອທາງໄກອະນຸຍາດໃຫ້ຜູ້ໃຊ້ໜຶ່ງຄົນເຊື່ອມຕໍ່ກັບຄອມພິວເຕີຂອງອີກຜູ້ໃຊ້ໜຶ່ງໄດ້ໂດຍກົງ, ປົກກະຕິແມ່ນເພື່ອແກ້ໄຂບັນຫາ.

**e.ການສຳເນົາສຳຮອງ.** ທ່ານອາດຈະອັດສຳເນົາຊອບແວໄວ້ພຽງແຕ່ອັນດຽວ ເພື່ອຈຸດປະສົງຂອງການສຳຮອງ, ແລະ ອາດຈະໃຊ້ສຳເນົາສຳຮອງ ເພື່ອໂອນຊອບແວ ຖ້າໄດ້ມັນມາເປັນຊອບແວອັນດຽວ, ຕາມທີ່ອະທິບາຍໄວ້ຢູ່ໃນຂໍ້ທີ 4 ລຸ່ມນີ້.

**3.ຄວາມເປັນສ່ວນຕົວ; ຄຳຍິນຍອມໃຫ້ນຳໃຊ້ຂໍ້ມູນ.** ຄວາມເປັນສ່ວນຕົວຂອງທ່ານມີຄວາມສຳຄັນຕໍ່ພວກເຮົາ. ຄຸນສົມບັດຂອງຊອບແວບາງອັນສົ່ງ ຫຼື ຮັບຂໍ້ມູນ ເມື່ອໃຊ້ຄຸນສົມບັດເຫຼົ່ານັ້ນ. ຄຸນສົມບັດເຫຼົ່ານີ້ຫຼາຍອັນແມ່ນສາມາດປິດໄວ້ໄດ້ຢູ່ໃນໜ້າຈໍປະສານຂອງຜູ້ໃຊ້, ຫຼືທ່ານສາມາດເລືອກທີ່ຈະບໍ່ໃຊ້ມັນກໍ່ໄດ້. ໂດຍການຍອມຮັບຂໍ້ຕົກລົງນີ້ ແລະ ການໃຊ້ຊອບແວ ທ່ານເຫັນດີໃຫ້ Microsoft ເກັບເອົາ, ໃຊ້, ແລະ ເປີດເຜີຍຂໍ້ມູນຕາມທີ່ອະທິບາຍໄວ້ຢູ່ໃນປະ

ໂຫຍກຄວາມເປັນສ່ວນຕົວຂອງ Microsoft ໄດ້ (aka.ms/privacy), ແລະຕາມທີ່ອາດຈະອະທິບາຍໄວ້ຢູ່ໃນໜ້າຈໍປະສານຜູ້ໃຊ້ກ່ຽວຂ້ອງກັບຄຸນສົມບັດຂອງຊອບແວ.

**4.ການໂອນ.** ຂໍ້ບັງຄັບຂອງພາກນີ້ບໍ່ໄດ້ນໍາໃຊ້ ຖ້າທ່ານໄດ້ຊອບແວມາໃນຖານະເປັນຜູ້ຊົມໃຊ້ຢູ່ໃນປະເທດເຢຍລະມັນຫຼື ຢູ່ໃນປະເທດໃດໜຶ່ງທີ່ມີລາຍຊື່ຢູ່ໃນເວັບໄຊທ໌ນີ້ (aka.ms/transfer), ໃນກໍລະນີໃດກໍ່ຕາມ ການໂອນຊອບແວໄປໃຫ້ບຸກຄົນທີສາມ, ແລະ ສິດນໍາໃຊ້ມັນນັ້ນແມ່ນຕ້ອງປະຕິບັດຕາມກົດໝາຍ.

**a.ຊອບແວທີ່ຕິດຕັ້ງຢູ່ໃນອຸປະກອນແລ້ວ.** ຖ້າທ່ານໄດ້ຊອບແວມາໂດຍທີ່ຕິດຕັ້ງໄວ້ຢູ່ໃນອຸປະກອນແລ້ວ (ແລະ ຖ້າທ່ານຍັງໄດ້ອັບເກຣດຈາກຊອບແວທີ່ຕິດຕັ້ງໄວ້ຢູ່ໃນອຸປະກອນແລ້ວນໍາອີກ), ທ່ານອາດຈະໂອນການອະນຸຍາດເພື່ອໃຊ້ຊອບແວໄປໃຫ້ກັບຜູ້ໃຊ້ຄົນອື່ນໂດຍກົງໄດ້, ພຽງແຕ່ກັບອຸປະກອນທີ່ໄດ້ຮັບອະນຸຍາດ. ການໂອນຕ້ອງລວມມີຊອບແວ, ແລະ ປ້າຍກໍາກັບ Windows ແທ້ ພ້ອມທັງລະຫັດຜະລິດຕະພັນນໍາ, ຖ້າໃຫ້ມາກັບອຸປະກອນ. ກ່ອນການໂອນທີ່ໄດ້ຮັບອະນຸຍາດໃດໜຶ່ງ, ຝ່າຍອື່ນຕ້ອງເຫັນດີໃຫ້ຕົກລົງນີ້ນໍາໃຊ້ກັບການໂອນ ແລະ ໃຊ້ການໃຊ້ຊອບແວ.

**b.ຊອບແວທີ່ມາດ່ຽວ.** ຖ້າທ່ານໄດ້ຊອບແວມາເປັນຊອບແວດ່ຽວ (ແລະ ຖ້າທ່ານຍັງໄດ້ອັບເກຣດຈາກຊອບແວທີ່ທ່ານໄດ້ມາເປັນຊອບແວທີ່ມາດ່ຽວ), ທ່ານອາດຈະໂອນຊອບແວໄປໃຫ້ກັບອຸປະກອນອື່ນທີ່ເປັນຂອງທ່ານໂດຍກົງໄດ້. ທ່ານອາດຈະໂອນຊອບແວໄປຫາອຸປະກອນທີ່ຄົນອື່ນເປັນເຈົ້າຂອງໄດ້ ຖ້າ (i) ທ່ານເປັນຜູ້ໃຊ້ຊອບແວທີ່ໄດ້ຮັບອະນຸຍາດເປັນຜູ້ທໍາອິດ ແລະ (ii) ຜູ້ໃຊ້ໃໝ່ເຫັນດີກັບຂໍ້ກໍານົດຂອງຂໍ້ຕົກລົງນີ້. ທ່ານອາດຈະໃຊ້ສໍາເນົາສໍາຮອງ ທີ່ພວກເຮົາອະນຸຍາດໃຫ້ທ່ານເຮັດສໍາເນົາໄວ້ ຫຼືມີເດຍທີ່ຊອບແວໄດ້ມາ ເພື່ອໂອນຊອບແວໄດ້. ທຸກຄັ້ງທີ່ທ່ານໂອນຊອບແວໄປຫາອຸປະກອນໃໝ່, ທ່ານຕ້ອງເອົາຊອບແວອອກຈາກອຸປະກອນອັນກ່ອນຂອງທ່ານ. ທ່ານອາດຈະບໍ່ໂອນຊອບແວໄປເພື່ອແບ່ງປັນການອະນຸຍາດລະຫວ່າງອຸປະກອນ.

**5.ຊອບແວທີ່ໄດ້ຮັບອະນຸຍາດ ແລະການເປີດນໍາໃຊ້.** ທ່ານໄດ້ຮັບອະນຸຍາດໃຫ້ໃຊ້ຊອບແວນີ້ພຽງແຕ່ ຖ້າທ່ານໄດ້ຮັບອະນຸຍາດຢ່າງຖືກຕ້ອງ ແລະ ໄດ້ມີການເປີດນໍາໃຊ້ຊອບແວຢ່າງຖືກຕ້ອງກັບລະຫັດຜະລິດຕະພັນຂອງແທ້ ຫຼື ໂດຍວິທີການທີ່ໄດ້ຮັບອະນຸຍາດອື່ນ. ເມື່ອທ່ານເຊື່ອມຕໍ່ກັບອິນເຕີເນັດ ໃນຂະນະທີ່ກໍາລັງໃຊ້ຊອບແວ, ຊອບແວຈະຕິດຕໍ່ຫາ Microsoft ຫຼື ສາຂາຂອງມັນໂດຍອັດຕະໂນມັດ ເພື່ອດໍາເນີນການເປີດນໍາໃຊ້ ເພື່ອເຊື່ອມໂຍງມັນກັບອຸປະກອນສະເພາະ. ທ່ານຍັງສາມາດເປີດນໍາໃຊ້ຊອບແວເອົາເອງໂດຍທາງອິນເຕີເນັດ ຫຼື ທາງໂທລະສັບໄດ້. ໃນກໍລະນີໃດກໍ່ຕາມ, ການສົ່ງຂໍ້ມູນສະເພາະຈະເກີດຂຶ້ນ, ແລະ ອາດຈະມີການເກັບຄ່າອິນເຕີເນັດ, ການບໍລິການໂທລະສັບ ແລະ SMS. ໃນລະຫວ່າງການເປີດນໍາໃຊ້ (ຫຼື ການເປີດນໍາໃຊ້ຄືນ ທີ່ອາດຈະຖືກກໍ່ໃຫ້ເກີດຂຶ້ນ ໂດຍການປ່ຽນແປງອົງປະກອບຂອງອຸປະກອນຂອງທ່ານ), ຊອບແວອາດຈະກໍານົດວ່າ ຊອບແວອັນທີ່ຕິດຕັ້ງນັ້ນເປັນຂອງປອມ, ໄດ້ຮັບການອະນຸຍາດມາບໍ່ຖືກຕ້ອງ ຫຼື ມີການປ່ຽນແປງທີ່ບໍ່ໄດ້ຮັບອະນຸຍາດ. ຖ້າການເປີດນໍາໃຊ້ບໍ່ສໍາເລັດ, ຊອບແວຈະພະຍາຍາມສ້ອມແປງມັນເອງ ໂດຍການປ່ຽນແທນຊອບແວ Microsoft ທີ່ຖືກລັບກອນໃດໜຶ່ງດ້ວຍຊອບແວ Microsoft ຂອງແທ້. ທ່ານຍັງອາດຈະໄດ້ຮັບການເຕືອນໃຫ້ຮັບເອົາການອະນຸຍາດທີ່ຖືກຕ້ອງສໍາລັບຊອບແວນໍາອີກ. ການເປີດນໍາໃຊ້ສໍາເລັດບໍ່ໄດ້ຢືນຢັນວ່າ ຊອບແວເປັນຂອງແທ້ ຫຼື ໄດ້ຮັບອະນຸຍາດຢ່າງເໝາະສົມ. ທ່ານອາດຈະບໍ່ຂ້າມ ຫຼື ຫຼີກເວັ້ນການເປີດນໍາໃຊ້. ເພື່ອຊ່ວຍກໍານົດໄດ້ວ່າ ຊອບແວຂອງທ່ານເປັນຂອງແທ້ ຫຼື ບໍ່ ແລະ ທ່ານໄດ້ຮັບການອະນຸຍາດຖືກຕ້ອງບໍ່ນັ້ນ, ໃຫ້ເບິ່ງທີ່ (aka.ms/genuine). ການອັບເດດສະເພາະ, ການຮອງຮັບ, ແລະ ການບໍລິການອື່ນໆອາດຈະສະເໜີໃຫ້ກັບແຕ່ຜູ້ໃຊ້ຊອບແວ Microsoft ຂອງແທ້ເທົ່ານັ້ນ.

**6.ການອັບເດດ.** ຊອບແວກວດຫາການອັບເດດລະບົບ ແລະ ແອັບເປັນໄລຍະ, ແລະ ດາວໂຫຼດ ແລະ ຕິດຕັ້ງມັນໃຫ້ກັບທ່ານ. ທ່ານອາດຈະເອົາການອັບເດດມາຈາກແຕ່ Microsoft ຫຼື ແຫຼ່ງທີ່ມາໄດ້ຮັບອະນຸຍາດເທົ່ານັ້ນ, ແລະ Microsoft ອາດຈະຕ້ອງໄດ້ອັບເດດລະບົບຂອງທ່ານ ເພື່ອໃຫ້ການອັບເດດເຫຼົ່ານີ້ກັບທ່ານ. ໂດຍການຍອມຮັບຂໍ້ຕົກລົງນີ້, ທ່ານເຫັນດີຮັບເອົາປະເພດການອັບເດດອັດຕະໂນມັດເຫຼົ່ານີ້ ໂດຍບໍ່ຕ້ອງມີການແຈ້ງການເພີ່ມເຕີມ.

**7.ການຫຼຸດສິດລົງ.** ຖ້າທ່ານໄດ້ອຸປະກອນມາຈາກຜູ້ຜະລິດ ຫຼື ຜູ້ຕິດຕັ້ງທີ່ມີ Windows ເວີຊັນມືອາຊີບຕິດຕັ້ງມາພ້ອມກັບມັນ, ທ່ານອາດຈະໃຊ້ Windows 8.1 Pro ຫຼື Windows 7 Professional, ແຕ່ວ່າມີໃຫ້ພຽງແຕ່ເປັນໄລຍະເວລາເທົ່າທີ່ Microsoft ໃຫ້ການຮອງຮັບເວີຊັນກ່ອນນັ້ນເທົ່ານັ້ນ. ຕາມທີ່ໄດ້ກໍານົດໄວ້ຢູ່ໃນ (aka.ms/windowslifecycle). ຂໍ້ຕົກລົງນີ້ນໍາໃຊ້ກັບການໃຊ້ເວີຊັນກ່ອນຂອງທ່ານ. ຖ້າເວີຊັນເກົ່າມີອົງປະກອບທີ່ແຕກຕ່າງ, ແມ່ນຈະນໍາໃຊ້ຂໍ້ກໍານົດໃດໜຶ່ງສໍາລັບອົງປະກອບເຫຼົ່ານັ້ນທີ່ຢູ່ໃນຂໍ້ຕົກລົງທີ່ມາພ້ອມກັບເວີຊັນເກົ່າກັບການໃຊ້ອົງປະກອບດັ່ງກ່າວຂອງທ່ານ. ຜູ້ຜະລິດ ຫຼື ຜູ້ຕິດຕັ້ງ, ຫຼື Microsoft ບໍ່ມີພັນທະໜ້າທີ່ຈະສະໜອງເວີຊັນເກົ່າໃຫ້ທ່ານ. ທ່ານຕ້ອງຮັບເອົາເວີເຊິນເກົ່າແຍກຕ່າງຫາກ, ເຊິ່ງທ່ານອາດຈະຕ້ອງໄດ້ເສຍຄ່ານໍາ. ທ່ານອາດຈະປ່ຽນແທນເວີຊັນເກົ່າດ້ວຍເວີຊັນທີ່ທ່ານໄດ້ມາໃນເບື້ອງຕົ້ນໄດ້ທຸກເວລາ.

**8.ຂໍ້ຈໍາກັດທາງທີ່ຕັ້ງພູມສາດ ແລະ ການສົ່ງອອກ.** ຖ້າຊອບແວຂອງທ່ານຖືກຈໍາກັດສໍາລັບການໃຊ້ຢູ່ໃນພື້ນທີ່ທາງພູມສາດສະເພາະ, ທ່ານອາດຈະຕ້ອງໄດ້ເປີດໃຊ້ຊອບແວສະເພາະແຕ່ຢູ່ໃນພື້ນທີ່ນັ້ນເທົ່ານັ້ນ. ທ່ານຕ້ອງປະຕິບັດຕາມທຸກລະບຽບກົດໝາຍການສົ່ງອອກພາຍໃນ ແລະ ຕ່າງປະເທດ ທີ່ນໍາໃຊ້ກັບຊອບແວ, ເຊິ່ງລວມມີຂໍ້ຈໍາກັດກ່ຽວກັບທີ່ໝາຍ, ຜູ້ໃຊ້ທົ່ວໄປ, ແລະ ການໃຊ້ທົ່ວໄປ. ສໍາລັບຂໍ້ມູນເພີ່ມເຕີມກ່ຽວກັບຂໍ້ຈໍາກັດທາງດ້ານພູມສາດ ແລະ ການສົ່ງອອກ, ໃຫ້ເບິ່ງ (aka.ms/georestrict) ແລະ (aka.ms/exporting).

**9.ຂັ້ນຕອນດໍາເນີນການຮອງຮັບ ແລະ ການສົ່ງເງິນຄືນ.**

**a.ສໍາລັບຊອບແວທີ່ຕິດຕັ້ງຢູ່ໃນອຸປະກອນແລ້ວ.** ສໍາລັບຊອບແວໂດຍທົ່ວໄປນັ້ນ, ໃຫ້ຕິດຕໍ່ກັບຜູ້ຜະລິດອຸປະກອນ ຫຼື ຜູ້ຕິດຕັ້ງສໍາລັບທາງເລືອກການຮອງຮັບ. ໃຫ້ເບິ່ງໝາຍເລກການຮອງຮັບທີ່ໃຫ້ມາກັບຊອບແວ. ສໍາລັບການອັບເດດ ແລະ ການເສີມໃສ່ທີ່ໄດ້ຮັບມາຈາກ Microsoft ໂດຍກົງ, Microsoft ອາດຈະໃຫ້ການບໍລິການຮອງຮັບທີ່ຈໍາກັດສໍາລັບຊອບແວທີ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງຕາມທີ່ໄດ້ອະທິບາຍໄວ້ທີ່ (aka.ms/mssupport). ຖ້າທ່ານກໍາລັງຂໍເງິນຄືນ, ຕິດຕໍ່ຜູ້ຜະລິດ ຫຼື ຜູ້ຕິດຕັ້ງ ເພື່ອກໍານົດນະໂຍບາຍການສົ່ງເງິນຄືນ. ທ່ານຕ້ອງປະຕິບັດຕາມນະໂຍບາຍເຫຼົ່ານັ້ນ, ເຊິ່ງອາດຈະຕ້ອງໃຫ້ທ່ານສົ່ງຊອບແວຄືນພ້ອມກັບອຸປະກອນທັງໝົດທີ່ໄດ້ຕິດຕັ້ງຊອບແວໃສ່ ເພື່ອສົ່ງເງິນຄືນ.

**b.ສໍາລັບຊອບແວທີ່ໄດ້ມາຈາກຜູ້ຂາຍຍ່ອຍ.** Microsoft ອາດຈະໃຫ້ການບໍລິການຮອງຮັບທີ່ຈໍາກັດສໍາລັບຊອບແວທີ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງຕາມທີ່ໄດ້ອະທິບາຍໄວ້ທີ່ (aka.ms/mssupport). ຖ້າທ່ານຊື້ຊອບແວຈາກຜູ້ຂາຍຍ່ອຍ ແລະ ຂໍເງິນຄືນ, ແລະທ່ານບໍ່ສາມາດໄດ້ຮັບມັນຄືນໄດ້ຈາກບ່ອນທີ່ທ່ານໄດ້ຊອບແວມາ, ຕິດຕໍ່ຫາ Microsoft ສໍາລັບຂໍ້ມູນກ່ຽວກັບນະໂຍບາຍການສົ່ງເງິນຄືນຂອງ Microsoft. ເບິ່ງທີ່ (aka.ms/msoffices), ຫຼື ຢູ່ໃນເຂດອາເມຣິກາເໜືອ, ໂທ (800) MICROSOFT ຫຼື ເບິ່ງ (aka.ms/nareturns).

**10.ການໄກ່ເກ່ຍຜູກພັນ ແລະ ການສະຫຼະສິດການດໍາເນີນການຕາມຂັ້ນ ຖ້າທ່ານຢູ່ໃນ (ຫຼືບ່ອນດໍາເນີນທຸລະກິດຕົ້ນຕໍຂອງທ່ານຢູ່ໃນ) ສະຫະລັດ.**

ພວກເຮົາຫວັງວ່າ ພວກເຮົາຈະບໍ່ມີຂໍ້ຂັດແຍ້ງ, ແຕ່ຖ້າພວກເຮົາມີ, ທ່ານ ແລະ ພວກເຮົາເຫັນດີທີ່ຈະພະຍາຍາມແກ້ໄຂມັນຢ່າງບໍ່ເປັນທາງການເປັນເວລາ 60 ວັນ. ຖ້າພວກເຮົາບໍ່ສາມາດແກ້ໄຂໄດ້, ທ່ານ ແລະ ພວກເຮົາເຫັນດີທີ່ຈະ **ຜູກພັນການໄກ່ເກ່ຍບຸກຄົນ ກ່ອນຮອດສະມາຄົມການໄກ່ເກ່ຍອາເມຣິກາ ("AAA") ພາຍໃຕ້ກົດລະບຽບການໄກ່ເກ່ຍຂອງລັດຖະບານກາງ ("FAA"), ແລະ ບໍ່ຟ້ອງສານຢູ່ຕໍ່ໜ້າຜູ້ພິພາກສາ ຫຼື ຄະນະກຳມະການຕັດສິນຄະດີ.** ຜູ້ໄກ່ເກ່ຍທີ່ເປັນກາງຈະຕັດສິນ ແລະ ຄຳຕັດສິນຂອງຜູ້ໄກ່ເກ່ຍຈະເປັນອັນຊີ້ຂາດແທນ, ຍົກເວັ້ນສຳລັບສິດຈຳກັດຂອງການອຸທອນພາຍໃຕ້ FAA. **ການຮ້ອງຟ້ອງການດຳເນີນການຕາມຂັ້ນ, ການໄກ່ເກ່ຍລະດັບກ້ວາງ, ການດຳເນີນການທະນາຍຄວາມທົ່ວໄປເອກະຊົນ, ແລະການຮ້ອງຟ້ອງອື່ນໃດໜຶ່ງ ໃນບ່ອນທີ່ມີບາງຄົນດຳເນີນການໃນການເປັນຜູ້ຕາງໜ້າແມ່ນບໍ່ອະນຸຍາດໃຫ້ປະຕິບັດ.ຫຼືບໍ່ໃຫ້ມີການລວມການຮ້ອງຟ້ອງບຸກຄົນ ໂດຍບໍ່ມີຄຳຍິນຍອມຂອງທຸກຝ່າຍ.** "ພວກເຮົາ," "ຂອງພວກເຮົາ," ແລະ "ພວກເຮົາ" ລວມມີ Microsoft, ຜູ້ຜະລິດອຸປະກອນ, ແລະ ຜູ້ຕິດຕັ້ງຊອບແວ.

a. **ຂໍ້ຂັດແຍ້ງກວມເອົາ—ທຸກສິ່ງທຸກຢ່າງ ຍົກເວັ້ນ IP.** ຄຳວ່າ "ຂໍ້ຂັດແຍ້ງ" ແມ່ນກ້ວາງເທົ່າທີ່ມັນສາມາດເປັນໄປໄດ້. ມັນກວມເອົາການຮ້ອງຮຽນ ຫຼື ການໂຕ້ແຍ້ງໃດໜຶ່ງລະຫວ່າງທ່ານ ແລະ ຜູ້ຜະລິດ ຫຼື ຜູ້ຕິດຕັ້ງ, ຫຼື ທ່ານ ແລະ Microsoft, ກ່ຽວກັບຊອບແວ, ລາຄາຂອງມັນ, ຫຼືຂໍ້ຕົກລົງນີ້, ພາຍໃຕ້ທິດສະດີທາງກົດໝາຍໃດໜຶ່ງ ລວມທັງສັນຍາ, ການຮັບປະກັນ, ການກະທຳຜິດທາງກົດໝາຍ, ລັດຖະບັນຍັດ, ຫຼື ກົດລະບຽບ, **ຍົກເວັ້ນຂໍ້ຂັດແຍ້ງທີ່ກ່ຽວຂ້ອງກັບການບັງຄັບໃຊ້ ຫຼື ຄວາມສາມາດນຳໃຊ້ໄດ້ຂອງສິດທີຊັບສິນທາງປັນຍາຂອງທ່ານ, ຂອງຜູ້ໃຫ້ອະນຸຍາດຂອງທ່ານ, ຂອງພວກເຮົາ, ຫຼື ຂອງຜູ້ໃຫ້ການອະນຸຍາດຂອງພວກເຮົາ.**

b. **ສົ່ງແຈ້ງການຂໍ້ຂັດແຍ້ງກ່ອນ.** ຖ້າທ່ານມີຂໍ້ຂັດແຍ້ງ ແລະ ຜູ້ຕາງໜ້າບໍລິການລູກຄ້າຂອງພວກເຮົາບໍ່ສາມາດແກ້ໄຂມັນໄດ້, ໃຫ້ສົ່ງແຈ້ງການຄວາມຂັດແຍ້ງໄປໃຫ້ຜູ້ຜະລິດ ຫຼື ຜູ້ຕິດຕັ້ງໂດຍທາງໄປສະນີຂອງສະຫະລັດ, ໃຫ້ຈ່າໜ້າຊອງເຖິງ: ພະແນກກົດໝາຍ ຖ້າຂໍ້ຂັດແຍ້ງຂອງທ່ານມີກັບ Microsoft, ໃຫ້ສົ່ງໄປຫາ Microsoft Corporation ໂດຍທາງໄປສະນີ, ໃຫ້ຈ່າໜ້າຊອງເຖິງ: LCA ARBITRATION, One Microsoft Way, Redmond, WA 98052-6399. ຈົ່ງແຈ້ງບອກພວກເຮົາໃຫ້ຮູ້ຈັກຊື່, ທີ່ຢູ່ຂອງທ່ານ, ວິທີຕິດຕໍ່ກັບທ່ານ, ບັນຫາແມ່ນຫຍັງ, ແລະ ທ່ານຕ້ອງການອັນໃດ. ແບບຟອມມີໃຫ້ຢູ່ທີ່ (aka.ms/disputeform). ພວກເຮົາກໍ່ຈະເຮັດຄືກັນ ຖ້າພວກເຮົາມີຂໍ້ຂັດແຍ້ງກັບທ່ານ. ຫຼັງຈາກ 60 ວັນ, ທ່ານ ຫຼື ພວກເຮົາອາດຈະເລີ່ມຕົ້ນການໄກ່ເກ່ຍ ຖ້າຂໍ້ຂັດແຍ້ງຍັງບໍ່ໄດ້ຮັບການແກ້ໄຂ.

c. **ທາງເລືອກຂອງສານຮ້ອງຟ້ອງນ້ອຍ.** ຖ້າທ່ານມີເງື່ອນໄຂຕາມຂໍ້ກຳນົດຂອງສານ, ແທນທີ່ຈະສົ່ງແຈ້ງການຂໍ້ຂັດແຍ້ງໄປໂດຍທາງໄປສະນີ, ທ່ານອາດຈະຮ້ອງຟ້ອງພວກເຮົາຢູ່ໃນສານຮ້ອງຟ້ອງນ້ອຍ ຢູ່ໃນຄາວຕີ້ທີ່ທ່ານຢູ່ອາໄສ (ຫຼື ຖ້າທຸລະກິດຢູ່ໃນບ່ອນດຳເນີນທຸລະກິດຕົ້ນຕໍຂອງທ່ານ) ຫຼື ບ່ອນດຳເນີນທຸລະກິດຕົ້ນຕໍຂອງພວກເຮົາໄດ້ຊັ່ນ ຄິງຄາວຕີ້, ວໍຊິງຕັນ, ສະຫະລັດອາເມຣິກາ ຖ້າຂໍ້ຂັດແຍ້ງຂອງທ່ານແມ່ນມີກັບ Microsoft. ພວກເຮົາຫວັງວ່າ ທ່ານຈະສົ່ງແຈ້ງການຂໍ້ຂັດແຍ້ງໂດຍທາງໄປສະນີ ແລະ ໃຫ້ເວລາກັບພວກເຮົາ 60 ວັນ ເພື່ອພະຍາຍາມແກ້ໄຂມັນ, ແຕ່ທ່ານບໍ່ຕ້ອງເຮັດກ່ອນໄປສານຮ້ອງຟ້ອງນ້ອຍ.

d. **ຂັ້ນຕອນດຳເນີນການໄກ່ເກ່ຍ.** AAA ຈະດຳເນີນການໄກ່ເກ່ຍໃດໜຶ່ງພາຍໃຕ້ກົດລະບຽບການໄກ່ເກ່ຍທາງການຄ້າຂອງຂອງຕົນເອງ (ຫຼື ຖ້າທ່ານເປັນບຸກຄົນ ແລະ ໃຊ້ຊອບແວເພື່ອການໃຊ້ສ່ວນຕົວ ຫຼື ຄອບຄົວ, ຫຼື ຖ້າມູນຄ່າຂອງຂໍ້ຂັດແຍ້ງແມ່ນ $75,000 ຫຼື ໜ້ອຍກວ່າ ບໍ່ວ່າທ່ານຈະເປັນບຸກຄົນ ຫຼື ທ່ານໃຊ້ຊອບແວແນວໃດກໍ່ຕາມ, ຈະໃຊ້ກົດລະບຽບການໄກ່ເກ່ຍຜູ້ບໍລິໂພກຂອງຕົນ). ສຳລັບຂໍ້ມູນເພີ່ມເຕີມ, ໃຫ້ເບິ່ງ

(aka.ms/adr) ຫຼືໂທຫາ 1-800-778-7879. ເພື່ອເລີ່ມຕົ້ນການໄກ່ເກ່ຍ, ໃຫ້ສົ່ງແບບຟອມທີ່ມີຢູ່ທີ່ (aka.ms/arbitration) ໄປໃຫ້ AAA; ສົ່ງສໍາເນົາສະບັບໜຶ່ງໄປໃຫ້ກັບຜູ້ຜະລິດ ຫຼື ຜູ້ຕິດຕັ້ງໂດຍທາງໄປສະນີ (ຫຼືສົ່ງໃຫ້ Microsoft ຖ້າຂໍ້ຂັດແຍ້ງຂອງທ່ານແມ່ນກັບ Microsoft). ຢູ່ໃນການແກ້ໄຂຂໍ້ຂັດແຍ້ງທີ່ພົວພັນກັບເງິນ $25,000 ຫຼື ໜ້ອຍກວ່າ, ການພິຈາລະນາສືບສວນໃດໜຶ່ງແມ່ນຈະເຮັດທາງໂທລະສັບ ນອກຈາກວ່າຜູ້ໄກ່ເກ່ຍພົບເຫດຜົນອັນດີທີ່ຈະເຮັດການພິຈາລະນາສືບສວນໃຫ້ຄົນເຂົ້າມາແທນ. ການພິຈາລະນາສືບສວນບຸກຄົນໃດໜຶ່ງແມ່ນຈະເຮັດຢູ່ໃນຄາວຕີ້ທີ່ທ່ານຢູ່ອາໄສ (ຖ້າທຸລະກິດຢູ່ໃນບ່ອນດໍາເນີນທຸລະກິດຕົ້ນຕໍຂອງທ່ານ) ຫຼື ບ່ອນດໍາເນີນທຸລະກິດຕົ້ນຕໍຂອງພວກເຮົາໄດ້ເຊັ່ນ ຄິງຄາວຕີ້, ວໍຊິງຕັນ ຖ້າຂໍ້ຂັດແຍ້ງຂອງທ່ານມີກັບ Microsoft. ທ່ານເລືອກເອົາ. ຜູ້ໄກ່ເກ່ຍອາດຈະຕັດສິນຄວາມເສຍຫາຍອັນດຽວກັນໃຫ້ກັບທ່ານເປັນລາຍບຸກຄົນຕາມທີ່ສານສາມາດເຮັດໄດ້. ຜູ້ໄກ່ເກ່ຍອາດຈະຕັດສິນການຊ່ວຍເຫຼືອເປັນການແຈ້ງບອກ ຫຼື ສັ່ງຫ້າມໃຫ້ກັບທ່ານເປັນບຸກຄົນເທົ່ານັ້ນ, ເພື່ອໃຫ້ເພິ່ງພໍໃຈກັບຂໍ້ຮຽກຮ້ອງບຸກຄົນຂອງທ່ານເທົ່ານັ້ນ.

**e.ຄ່າທໍານຽມການໄກ່ເກ່ຍ ແລະ ການຊໍາລະ.**

(i) **ຂໍ້ຂັດແຍ້ງພົວພັນກັບເງິນ $75,000 ຫຼື ໜ້ອຍກວ່າ.** ຜູ້ຜະລິດ ຫຼື ຜູ້ຕິດຕັ້ງ (ຫຼື Microsoft ຖ້າຂໍ້ຂັດແຍ້ງຂອງທ່ານແມ່ນກັບ Microsoft) ຈະເບີກເງິນຄ່າທໍານຽມການຍື່ນຮ້ອງຟ້ອງຂອງທ່ານ ແລະ ຈ່າຍຄ່າທໍານຽມ ແລະ ຄ່າໃຊ້ຈ່າຍຂອງ AAA ແລະ ຜູ້ໄກ່ເກ່ຍທັນທີ. ຖ້າທ່ານປະຕິເສດການສະເໜີໃຫ້ໃບລາຍງານເປັນລາຍລັກອັກສອນສຸດທ້າຍຂອງພວກເຮົາ ທີ່ເຮັດຂຶ້ນກ່ອນໄດ້ແຕ່ງຕັ້ງຜູ້ໄກ່ເກ່ຍ ("ການສະເໜີໃຫ້ເປັນລາຍລັກອັກສອນສຸດທ້າຍຂອງ Microsoft"), ຂໍ້ຂັດແຍ້ງຂອງທ່ານທັງໝົດກໍາລັງໄປສູ່ຄໍາຕັດສິນຂອງຜູ້ໄກ່ເກ່ຍ (ເອີ້ນວ່າ "ຄໍາຕັດສິນ"), ແລະ ຜູ້ໄກ່ເກ່ຍຕັດສິນທ່ານຫຼາຍກວ່າການສະເໜີໃຫ້ເປັນລາຍລັກອັກສອນສຸດທ້າຍນີ້, ຜູ້ຜະລິດ ຫຼື ຜູ້ຕິດຕັ້ງ (ຫຼື Microsoft ຖ້າທ່ານມີຂໍ້ຂັດແຍ້ງກັບ Microsoft) ຈະ: (1) ຈ່າຍຫຼາຍກວ່າຄໍາຕັດສິນ ຫຼື $1,000; (2) ຈ່າຍຄ່າທໍານຽມທະນາຍຄວາມຂອງທ່ານຕາມເຫດຜົນ; ແລະ (3) ເບີກເງິນຄ່າໃຊ້ຈ່າຍໃດໜຶ່ງຄືນໃຫ້ (ລວມທັງຄ່າທໍານຽມ ແລະ ຄ່າໃຊ້ຈ່າຍພະຍານຜູ້ຊ່ຽວຊານ) ທີ່ທະນາຍຄວາມຂອງທ່ານສະສົມຂຶ້ນຕາມເຫດຜົນເພື່ອເຮັດການສືບສວນ, ກະກຽມ, ແລະ ດໍາເນີນຂໍ້ຮຽກຮ້ອງຂອງທ່ານຢູ່ໃນການໄກ່ເກ່ຍ. ຜູ້ໄກ່ເກ່ຍຈະກໍານົດຈໍານວນເງິນ ນອກຈາກວ່າທ່ານ ແລະ ພວກເຮົາເຫັນດີນໍາຄ່າຕ່າງໆເຫຼົ່ານັ້ນ.

(ii) **ຂໍ້ຂັດແຍ້ງທີ່ພົວພັນຫຼາຍກວ່າ $75,000.** ກົດລະບຽບຂອງ AAA ຈະຄຸ້ມຄອງການຊໍາລະຄ່າທໍານຽມການຍື່ນ ແລະ ຄ່າທໍານຽມ ແລະ ຄ່າໃຊ້ຈ່າຍຂອງ AAA ແລະ ຜູ້ໄກ່ເກ່ຍ.

(iii) **ຂໍ້ຂັດແຍ້ງທີ່ພົວພັນເງິນຈໍານວນໃດໜຶ່ງ.** ຖ້າທ່ານເລີ່ມຕົ້ນການໄກ່ເກ່ຍ ພວກເຮົາຈະບໍ່ຂໍຄ່າທໍານຽມ ແລະ ຄ່າໃຊ້ຈ່າຍຂອງ AAA ຫຼື ຂອງຜູ້ໄກ່ເກ່ຍເອງ, ຫຼື ຄ່າທໍານຽມການຍື່ນຂອງທ່ານທີ່ມັນໄດ້ເບີກຈ່າຍຄືນໃຫ້, ນອກຈາກວ່າຜູ້ໄກ່ເກ່ຍພົບເຫັນການໄກ່ເກ່ຍບໍ່ໄດ້ເອົາຈິງເອົາຈັງ ຫຼື ນໍາຂຶ້ນມາເພື່ອຈຸດປະສົງທີ່ບໍ່ເໝາະສົມ. ຖ້າພວກເຮົາເລີ່ມຕົ້ນການໄກ່ເກ່ຍ ພວກເຮົາຈະຈ່າຍທຸກຄ່າທໍານຽມ ແລະ ຄ່າໃຊ້ຈ່າຍຂອງການຍື່ນ, AAA, ແລະ ຜູ້ໄກ່ເກ່ຍ. ພວກເຮົາຈະບໍ່ຂໍຄ່າທໍານຽມ ຫຼື ຄ່າໃຊ້ຈ່າຍຂອງທະນາຍຄວາມຂອງຕົນເອງຈາກທ່ານຢູ່ໃນການໄກ່ເກ່ຍໃດໜຶ່ງ.ຄ່າທໍານຽມ ແລະ ຄ່າໃຊ້ຈ່າຍຕ່າງໆບໍ່ຖືກນັບເຂົ້າຢູ່ໃນການກໍານົດວ່າ ຂໍ້ຂັດແຍ້ງໜຶ່ງພົວພັນຫຼາຍປານໃດ.

**f.ຕ້ອງຍື່ນພາຍໃນໜຶ່ງປີ.** ທ່ານ ແລະ ພວກເຮົາຕ້ອງຍື່ນສານຮ້ອງຟ້ອງນ້ອຍ ຫຼື ການໄກ່ເກ່ຍຂໍ້ຮຽກຮ້ອງ ຫຼືຂໍ້ຂັດແຍ້ງໃດໜຶ່ງ (ຍົກເວັ້ນຂໍ້ຂັດແຍ້ງຊັບສິນທາງປັນຍາ — ເບິ່ງຂໍ້ທີ 10.ກ.) ພາຍໃນໜຶ່ງປີຈາກເມື່ອມັນສາ

ມາດຍື່ນໄດ້ກ່ອນ. ຖ້າບໍ່ດັ່ງນັ້ນ, ມັນຈະຖືກຫ້າມຖາວອນ.

**g.ການແຍກອອກນຳໃຊ້.** ຖ້າການສະຫຼະສິດການກະທຳຕາມຂັ້ນຖືກພົບວ່າຜິດກົດໝາຍ ຫຼື ບໍ່ສາມາດບັງຄັບໃຊ້ໄດ້ຕາມທຸກສ່ວນ ຫຼື ບາງສ່ວນຂອງຂໍ້ຂັດແຍ້ງ, ສ່ວນເຫຼົ່ານັ້ນຈະບໍ່ຖືກໄກ່ເກ່ຍ ແຕ່ຈະດຳເນີນຕໍ່ໄປໃນສານ, ໂດຍສ່ວນທີ່ເຫຼືອຈະດຳເນີນຢູ່ໃນການໄກ່ເກ່ຍ. ຖ້າຂໍ້ບັນຍັດອື່ນໃດໜຶ່ງຂອງຂໍ້ 10 ຖືກພົບວ່າຜິດກົດໝາຍ ຫຼື ບໍ່ສາມາດບັງຄັບໃຊ້ໄດ້, ຂໍ້ບັນຍັດນັ້ນຈະຖືກຕັດອອກໄປ ແຕ່ສ່ວນທີ່ຍັງເຫຼືອຂອງຂໍ້ທີ 10 ແມ່ນຍັງຄົງມີຜົນນຳໃຊ້ໄດ້.

**h.ການຂັດກັນກັບກົດລະບຽບ AAA.** ຂໍ້ຕົກລົງນີ້ຄຸ້ມຄອງ ຖ້າມັນຂັດກັນກັບກົດລະບຽບການໄກ່ເກ່ຍທາງການຄ້າຂອງ AAA ຫຼື ກົດລະບຽບການໄກ່ເກ່ຍຜູ້ບໍລິໂພກ.

**i.Microsoft ເປັນຝ່າຍໜຶ່ງ ຫຼື ຜູ້ໄດ້ຮັບຜົນປະໂຫຍດບຸກຄົນທີສາມ.** ຖ້າ Microsoft ເປັນຜູ້ຜະລິດອຸປະກອນ ຫຼື ຖ້າທ່ານໄດ້ຊອບແວມາຈາກຜູ້ຂາຍຍ່ອຍ, Microsoft ເປັນຝ່າຍໜຶ່ງຂອງຂໍ້ຕົກລົງນີ້. ອີກຢ່າງໜຶ່ງ, Microsoft ບໍ່ໄດ້ເປັນຝ່າຍໜຶ່ງ ແຕ່ເປັນຜູ້ໄດ້ຮັບຜົນປະໂຫຍດບຸກຄົນທີສາມຂອງຂໍ້ຕົກລົງຂອງທ່ານກັບຜູ້ຜະລິດ ຫຼື ຜູ້ຕິດຕັ້ງ ເພື່ອແກ້ໄຂຂໍ້ຂັດແຍ້ງຜ່ານການເຈລະຈາ ຫຼື ການໄກ່ເກ່ຍບໍ່ເປັນທາງການ.

**11.ກົດໝາຍຄຸ້ມຄອງ.** ກົດໝາຍຂອງລັດ ຫຼື ຂອງປະເທດບ່ອນທ່ານຢູ່ (ຫຼື ຖ້າທຸລະກິດເປັນບ່ອນທີ່ດຳເນີນທຸລະກິດຕົ້ນຕໍຂອງທ່ານ) ຄຸ້ມຄອງທຸກຂໍ້ຮຽກຮ້ອງ ແລະ ຂໍ້ຂັດແຍ້ງກ່ຽວກັບຊອບແວ, ລາຄາຂອງມັນ, ຫຼືຂໍ້ຕົກລົງນີ້, ລວມທັງການລະເມີດຂໍ້ຮຽກຮ້ອງການຕິດຕໍ່ ແລະ ຂໍ້ຮຽກຮ້ອງພາຍໃຕ້ກົດໝາຍການປົກປ້ອງຜູ້ຊົມໃຊ້, ກົດໝາຍການແຂ່ງຂັນທີ່ບໍ່ເປັນທຳ, ກົດໝາຍການຮັບປະກັນແຈ້ງ, ສຳລັບການເພີ່ມຄວາມບໍ່ເປັນທຳ, ແລະ ຢູ່ໃນການກະທຳລະເມີດເສຍຫາຍ, ໂດຍບໍ່ຄຳນຶງເຖິງການຂັດກັນຂອງຫຼັກການທາງກົດໝາຍ. ຢູ່ໃນສະຫະລັດ, FAA ຄຸ້ມຄອງທຸກຂໍ້ບັນຍັດກ່ຽວຂ້ອງກັບການໄກ່ເກ່ຍ.

**12.ສິດຂອງຜູ້ຊົມໃຊ້, ການປ່ຽນແປງໃນພາກພື້ນ.** ຂໍ້ຕົກລົງນີ້ອະທິບາຍເຖິງສິດທາງກົດໝາຍສະເພາະ. ທ່ານອາດຈະມີສິດອື່ນ, ລວມທັງສິດຜູ້ບໍລິໂພກພາຍໃຕ້ກົດໝາຍຂອງລັດ ຫຼືຄາວຕີ້ຂອງທ່ານ. ທ່ານຍັງອາດຈະມີສິດກ່ຽວກັບຝ່າຍຈາກທີ່ທ່ານໄດ້ຊອບແວມານັ້ນຕື່ມອີກ. ຂໍ້ຕົກລົງນີ້ບໍ່ປ່ຽນແປງສິດອື່ນເຫຼົ່ານັ້ນ ຖ້າກົດໝາຍຂອງລັດ ຫຼື ປະເທດຂອງທ່ານບໍ່ອະນຸຍາດໃຫ້ເຮັດ. ຕົວຢ່າງ, ຖ້າທ່ານໄດ້ຊອບແວມາຈາກໜຶ່ງໃນພາກພື້ນຢູ່ລຸ່ມນີ້, ຫຼື ກົດໝາຍຂອງປະເທດບັງຄັບນຳໃຊ້, ຂໍ້ບັນຍັດຕໍ່ໄປນີ້ແມ່ນນຳໃຊ້ກັບທ່ານ:

**a.ອົດສະຕາລີ.** ການອ້າງອີງເຖິງ "ການຮັບປະກັນຈຳກັດ" ແມ່ນການອ້າງອີງເຖິງການຮັບປະກັນຈະແຈ້ງທີ່ທາງ Microsoft ຫຼື ຜູ້ຜະລິດ ຫຼື ຜູ້ຕິດຕັ້ງຈັດໃຫ້. ການຮັບປະກັນນີ້ແມ່ນເປັນການເພີ່ມເຕີມໃສ່ສິດ ແລະ ການແກ້ໄຂອື່ນທີ່ທ່ານອາດຈະມີຢູ່ພາຍໃຕ້ກົດໝາຍ, ລວມທັງສິດ ແລະ ການແກ້ໄຂຂອງທ່ານຕາມການຮັບປະກັນຕາມກົດໝາຍພາຍໃຕ້ກົດໝາຍຜູ້ຊົມໃຊ້ຂອງອົດສະຕາລີ.

ຢູ່ໃນພາກນີ້, "ສິນຄ້າ" ໝາຍເຖິງຊອບແວທີ່ Microsoft ຫຼື ຜູ້ຜະລິດ ຫຼື ຜູ້ຕິດຕັ້ງໃຫ້ການຮັບປະກັນກ່ອນ. ສິນຄ້າຂອງພວກເຮົາມາພ້ອມກັບການຮັບປະກັນທີ່ບໍ່ສາມາດຍົກເວັ້ນໄດ້ພາຍໃຕ້ກົດໝາຍຜູ້ຊົມໃຊ້ຂອງອົດສະຕາລີ. ທ່ານມີສິດຕໍ່ການປ່ຽນແປງ ຫຼື ການສົ່ງເງິນຄືນສຳລັບຄວາມຫຼົ້ມເຫຼວຕົ້ນຕໍ ແລະ ການຊົດເຊີຍຕໍ່ການສູນເສຍ ຫຼື ຄວາມເສຍຫາຍທີ່ສາມາດຄາດການໄດ້ຢ່າງສົມເຫດສົມຜົນອື່ນໆ. ທ່ານຍັງມີສິດໄດ້ຮັບການ

ສ້ອມແປງສິນຄ້າ ຫຼື ປ່ຽນໃໝ່ໄດ້ ຖ້າສິນຄ້າບໍ່ໄດ້ຕາມຄຸນນະພາບທີ່ສາມາດຍອມຮັບໄດ້ ແລະ ຄວາມຫຼົ້ມເຫຼວບໍ່ລວມເອົາຄວາມຫຼົ້ມເຫຼວຕົ້ນຕໍ.

**b.ການາດາ.** ທ່ານອາດຈະເຊົາຮັບເອົາການອັບເດດຢູ່ໃນອຸປະກອນຂອງທ່ານໄດ້ ໂດຍການປິດການເຂົ້າຫາອິນເຕີເນັດ. ຖ້າ ແລະ ເມື່ອທ່ານເຊື່ອມຕໍ່ອິນເຕີເນັດຄືນໃໝ່, ຊອບແວຈະເລີ່ມກວດຫາ ແລະຕິດຕັ້ງການອັບເດດຕໍ່.

**c.ສະຫະພາບເອີຣົບ.** ຂໍ້ຈໍາກັດການໃຊ້ທາງວິຊາການຢູ່ໃນຂໍ້ທີ 13.ງ(i) ລຸ່ມນີ້ບໍ່ນໍາໃຊ້ໄດ້ຢູ່ໃນອໍານາດສານທີ່ມີລາຍຊື່ຢູ່ໃນເວັບໄຊທ໌ນີ້: (aka.ms/academicuse).

**d.ເຢຍລະມັນ ແລະ ໂອຕຣິດ.**

(i) **ການຮັບປະກັນ.** ຊອບແວທີ່ໄດ້ອະນຸຍາດໃຫ້ຢ່າງເໝາະສົມຈະດໍາເນີນການຕາມທີ່ໄດ້ອະທິບາຍໄວ້ຢູ່ໃນເອກະສານ Microsoft ທີ່ມາພ້ອມກັບຊອບແວນີ້ເປັນສໍາຄັນ. ເຖິງແນວໃດກໍ່ຕາມ, ຜູ້ຜະລິດ ຫຼື ຜູ້ຕິດຕັ້ງ, ແລະ Microsoft ບໍ່ໃຫ້ການຄໍ້າປະກັນທີ່ມີສັນຍາກ່ຽວຂ້ອງກັບຊອບແວທີ່ໄດ້ອະນຸຍາດໃຫ້.

(ii) **ການຈໍາກັດຄວາມຮັບຜິດຊອບ.** ໃນກໍລະນີຂອງການປະພຶດໂດຍເຈດຕະນາ, ການລະເລີຍທັງໝົດ, ການຮຽກຮ້ອງຕາມກົດໝາຍວ່າດ້ວຍຄວາມຮັບຜິດຊອບຜະລິດຕະພັນ, ເຊັ່ນດຽວກັນກັບກໍລະນີຂອງການເສຍຊີວິດ ຫຼື ການບາດເຈັບສ່ວນຕົວ ຫຼື ທາງຮ່າງກາຍ, ຜູ້ຜະລິດ ຫຼື ຜູ້ຕິດຕັ້ງ, ຫຼື Microsoft ຮັບຜິດຊອບຕາມກົດໝາຍບັງຄັບໃຊ້.

ໂດຍອີງຕາມປະໂຫຍກກ່ອນມາກ່ອນນັ້ນ, ຜູ້ຜະລິດ ຫຼື ຜູ້ຕິດຕັ້ງ, ຫຼື Microsoft ຈະຮັບຜິດຊອບພຽງແຕ່ຕໍ່ກັບການລະເລີຍເລັກນ້ອຍເທົ່ານັ້ນ ຖ້າຜູ້ຜະລິດ ຫຼື ຜູ້ຕິດຕັ້ງ, ຫຼື Microsoft ມີການລະເມີດພັນທະໜ້າທີ່ຕາມສັນຍາເນື້ອໃນເນື້ອໃນດັ່ງກ່າວ, ການຕື່ມເຕັມທີ່ອໍານວຍຄວາມສະດວກການປະຕິບັດສັນຍານີ້ທີ່ຄືບກໍານົດ, ການລະເມີດທີ່ຈະເຮັດໃຫ້ເກີດເປັນອັນຕະລາຍຕໍ່ຈຸດປະສົງຂອງຂໍ້ຕົກລົງນີ້ ແລະ ການປະຕິບັດຕາມ ເຊິ່ງຝ່າຍໜຶ່ງອາດຈະເຊື່ອໝັ້ນບໍ່ປ່ຽນແປງ (ເຊິ່ງເອີ້ນວ່າ "ພັນທະໜ້າທີ່ສໍາຄັນ"). ໃນກໍລະນີຂອງການລະເລີຍເລັກນ້ອຍ, ຜູ້ຜະລິດ ຫຼືຜູ້ຕິດຕັ້ງ ຫຼື Microsoft ຈະບໍ່ຮັບຜິດຊອບຕໍ່ການລະເລີຍເລັກນ້ອຍ.

**e.ພາກພື້ນອື່ນໆ.** ເບິ່ງ (aka.ms/variations) ສໍາລັບລາຍຊື່ຂອງຄວາມແຕກຕ່າງລະຫວ່າງພາກພື້ນໃນປະຈຸບັນ.

**13.ແຈ້ງການເພີ່ມເຕີມ.**

**a.ເຄືອຂ່າຍ, ຂໍ້ມູນ ແລະ ການໃຊ້ອິນເຕີເນັດ.** ບາງຄຸນສົມບັດຂອງຊອບແວ ແລະ ການບໍລິການທີ່ເຂົ້າເຖິງຜ່ານຊອບແວອາດຈະຕ້ອງໄດ້ໃຫ້ອຸປະກອນຂອງທ່ານເຂົ້າຫາອິນເຕີເນັດ. ການເຂົ້າຫາ ແລະ ການໃຊ້ຂອງທ່ານ (ລວມທັງການເກັບຄ່າ) ອາດຈະຂຶ້ນກັບຂໍ້ກໍານົດຂອງສັນຍາຜູ້ໃຫ້ບໍລິການເຄືອຂ່າຍ ຫຼື ອິນເຕີເນັດຂອງທ່ານ. ຄຸນສົມບັດສະເພາະຂອງຊອບແວອາດຈະຊ່ວຍທ່ານເຂົ້າຫາອິນເຕີເນັດໄດ້ຢ່າງມີປະສິດທິພາບເພີ່ມຂຶ້ນ, ແຕ່ການຄິດໄລ່ການໃຊ້ຂອງຊອບແວອາດຈະແຕກຕ່າງໄປຈາກການວັດແທກຂອງຜູ້ໃຫ້ບໍລິການຂອງທ່ານ. ຕະຫຼອດເວລາທ່ານຕ້ອງຮັບຜິດຊອບຕໍ່ (i) ຄວາມເຂົ້າໃຈ ແລະ ການປະຕິບັດຕາມຂໍ້ກໍານົດຂອງແຜນການ

ແລ ະຂໍ້ຕົກລົງຂອງທ່ານເອງ, ແລະ (ii) ບັນຫາໃດໜຶ່ງທີ່ເກີດຂຶ້ນມາຈາກການໃຊ້ ຫຼື ການເຂົ້າຫາເຄືອຂ່າຍ, ລວມທັງເຄືອຂ່າຍສາທາລະນະ/ເປີດ. ທ່ານຍັງອາດຈະໃຊ້ຊອບແວເພື່ອເຊື່ອມຕໍ່ກັບເຄືອຂ່າຍ, ແລະ ເພື່ອແບ່ງປັນຂໍ້ມູນການເຂົ້າຫາກ່ຽວກັບເຄືອຂ່າຍເຫຼົ່ານັ້ນ, ພຽງແຕ່ຖ້າທ່ານໄດ້ຮັບອະນຸຍາດໃຫ້ເຮັດເທົ່ານັ້ນ.

**b.ມາດຕະຖານປະລັກຕາ H.264/AVC ແລະ MPEG-4 ແລະ ມາດຕະຖານວິດີໂອ VC-1.** ຊອບແວອາດຈະມີ H.264/MPEG-4 AVC ແລະ/ຫຼື ເຕັກໂນໂລຊີຖອດລະຫັດ VC-1. MPEG LA, L.L.C. ຮຽກຮ້ອງໃຫ້ມີແຈ້ງການນີ້ຄື:

ຜະລິດຕະພັນນີ້ໄດ້ຮັບອະນຸຍາດພາຍໃຕ້ AVC, VC-1, ແລະ ໃບອະນຸຍາດຊັບສິນສິດທິບັດປະລັກຕາພາກ 2 MPEG-4 ສຳລັບຜູ້ຊົມໃຊ້ທີ່ນຳໃຊ້ເປັນການສ່ວນຕົວ ແລະ ບໍ່ແມ່ນທາງການຄ້າ ເພື່ອ (i) ຖອດລະຫັດວິດີໂອຕາມມາດຕະຖານຂ້າງເທິງ ("ມາດຕະຖານວິດີໂອ") ແລະ/ຫຼື (ii) ຖອດລະຫັດ AVC, VC-1, ແລະ ວິດີໂອພາກ 2 MPEG-4 ທີ່ຜູ້ຊົມໃຊ້ໃສ່ລະຫັດໄວ້ໃນກິດຈະກຳທີ່ດຳເນີນເປັນສ່ວນຕົວ ແລະ ບໍ່ແມ່ນທາງການຄ້າ ແລະ/ຫຼື ໄດ້ມາຈາກຜູ້ໃຫ້ບໍລິການວິດີໂອທີ່ໄດ້ຮັບອະນຸຍາດໃຫ້ຈຳໜ່າຍວິດີໂອດັ່ງກ່າວ. ບໍ່ມີໃບອະນຸຍາດໃດທີ່ໄດ້ຈັດໃຫ້ ຫຼື ຈະຖືກບົ່ງບອກເພື່ອການໃຊ້ເປັນຢ່າງອື່ນໃດໜຶ່ງ.ຂໍ້ມູນເພີ່ມເຕີມອາດຈະໄດ້ຮັບຈາກ MPEG LA, L.L.C. ໃຫ້ເບິ່ງ (AKA.MS/MPEGLA).

**c.ການປ້ອງກັນມາລແວ.** Microsoft ເອົາໃຈໃສ່ປົກປ້ອງອຸປະກອນຂອງທ່ານບໍ່ໃຫ້ຕິດມາລແວ. ຊອບແວຈະເປີດການປົກປ້ອງມາລແວ ຖ້າການປົກປ້ອງອື່ນບໍ່ຖືກຕິດຕັ້ງ ຫຼື ໝົດອາຍຸ. ເພື່ອເຮັດແນວນັ້ນ, ຊອບແວປ້ອງກັນມາລແວອື່ນຈະຖືກປິດໃຊ້ງານ ຫຼື ອາດຈະຕ້ອງຖືກກຳຈັດອອກໄປ.

**d.ສະບັບສິດຈຳກັດ.** ຖ້າຊອບແວສະບັບທີ່ທ່ານໄດ້ມາຖືກໝາຍໄວ້ ຫຼື ມີເຈດຕະນາໃຫ້ໃຊ້ສະເພາະ ຫຼືຈຳກັດ, ທ່ານອາດຈະຕ້ອງໃຊ້ມັນແຕ່ຕາມທີ່ໄດ້ລະບຸໄວ້ເທົ່ານັ້ນ. ທ່ານຕ້ອງບໍ່ໃຊ້ຊອບແວເວີເຊິນດັ່ງກ່າວໄປເພື່ອດຳເນີນການທາງການຄ້າ, ການບໍ່ສ້າງຜົນກຳໄລ, ຫຼື ການສ້າງລາຍຮັບ.

(i) **ດ້ານວິຊາການ.** ສຳລັບການໃຊ້ທາງດ້ານວິຊາການ, ທ່ານອາດຈະຕ້ອງເປັນນັກຮຽນ, ຄະນະ ຫຼືພະນັກງານຂອງສະຖາບັນການສຶກສາຢູ່ໃນເວລາຂອງການຊື້.

(ii) **ການປະເມີນຜົນ.** ສຳລັບການໃຊ້ເພື່ອປະເມີນຜົນ (ຫຼື ການທົດສອບ ຫຼື ການສາທິດ), ທ່ານອາດຈະບໍ່ຂາຍຊອບແວ, ໃຊ້ມັນຢູ່ໃນສະພາບແວດລ້ອມດຳເນີນການສົດ, ຫຼືໃຊ້ມັນຫຼັງຈາກໄລຍະການປະເມີນຜົນແລ້ວ. ເຖິງຈະມີອັນໃດອັນໜຶ່ງຂັດກັນຢູ່ໃນຂໍ້ຕົກລົງນີ້ກໍ່ຕາມ, **ຊອບແວປະເມີນຜົນແມ່ນໄດ້ຈັດໃຫ້ "ຕາມທີ່ເປັນ" ແລະ ບໍ່ມີການຮັບປະກັນ, ບອກໄວ້ບໍ່ລະແຈ້ງ ຫຼື ລະແຈ້ງ (ລວມທັງການຮັບປະກັນທີ່ຈຳກັດ), ແມ່ນນຳໃຊ້ກັບບັນດາເວີຊັນເຫຼົ່ານີ້.**

(iii) **NFR.** ທ່ານອາດຈະບໍ່ຂາຍຊອບແວທີ່ໝາຍເປັນ "NFR" ຫຼື "ບໍ່ໃຫ້ຂາຍຄືນໃໝ່".

(iv) **ການເບິ່ງກ່ອນ.** ທ່ານອາດຈະເລືອກໃຊ້ຊອບແວເວີຊັນໃຫ້ເບິ່ງກ່ອນ, ຂອງຄົນພາຍໃນ, ບີຕາ ຫຼື ກ່ອນອອກເຜີຍແຜ່ອື່ນໆ ("ການເບິ່ງກ່ອນ") ທີ່ Microsoft ອາດຈະມີໃຫ້. ທ່ານອາດຈະໃຊ້ການເບິ່ງກ່ອນພຽງແຕ່ຮອດວັນທີໝົດອາຍຸຂອງຊອບແວໄດ້ ແລະ ຕາບເທົ່າທີ່ທ່ານປະຕິບັດຕາມຂໍ້ກຳນົດຂອງຂໍ້ຕົກລົງນີ້ທຸກຢ່າງ. ການເບິ່ງກ່ອນແມ່ນເປັນອັນທົດລອງ ແລະ ອາດຈະແຕກຕ່າງໄປຈາກເວີຊັນທີ່ອອກຈຳ

ໜ່າຍທາງການຄ້າຫຼາຍ. ເຖິງຈະມີອັນໃດອັນໜຶ່ງຂັດກັນຢູ່ໃນຂໍ້ຕົກລົງນີ້ກໍ່ຕາມ, **ການເບິ່ງກ່ອນແມ່ນໄດ້ຈັດໃຫ້ "ຕາມທີ່ເປັນ" ແລະ ບໍ່ມີການຮັບປະກັນ, ບອກໄວ້ບໍ່ລະແລ້ງ ຫຼື ລະແລ້ງ (ລວມທັງການຮັບປະກັນທີ່ຈຳກັດ), ແມ່ນນຳໃຊ້ກັບບັນດາເວີຊັນເຫຼົ່ານີ້. ໂດຍການຕິດຕັ້ງການເບິ່ງກ່ອນຢູ່ໃນອຸປະກອນຂອງທ່ານ, ທ່ານອາດຈະເຮັດໃຫ້ການຮັບປະກັນອຸປະກອນຂອງທ່ານເປັນໂມຄະ ຫຼື ມີຜົນຕໍ່ການຮັບປະກັນອຸປະກອນຂອງທ່ານ ແລະ ອາດຈະບໍ່ມີສິດໄດ້ຮັບການຊ່ວຍເຫຼືອຈາກຜູ້ຜະລິດອຸປະກອນຂອງທ່ານ ຫຼື ຜູ້ດຳເນີນການເຄືອຂ່າຍ, ຖ້າກຳນົດໄດ້**. ດັ່ງນັ້ນ Microsoft ບໍ່ຮັບຜິດຊອບຕໍ່ຄວາມເສຍຫາຍໃດໆທີ່ເກີດຂຶ້ນກັບທ່ານ. Microsoft ອາດຈະບໍ່ໃຫ້ການບໍລິການສະໜັບສະໜູນສຳລັບການເບິ່ງກ່ອນ. ຖ້າທ່ານໃຫ້ຄຳຄິດເຫັນແກ່ Microsoft, ຄຳແນະນຳ ຫຼື ຄຳຕິຊົມອື່ນໆກ່ຽວກັບການເບິ່ງກ່ອນ ("ການສະເໜີ"), ທ່ານໃຫ້ສິດແກ່ Microsoft ແລະ ຫຸ້ນສ່ວນນຳໃຊ້ການສະເໜີດ້ວຍວິທີໃດໜຶ່ງ ແລະດ້ວຍຈຸດປະສົງໃດໜຶ່ງ.

**14.ທັງໝົດຂໍ້ຕົກລົງ.** ຂໍ້ຕົກລົງນີ້ (ພ້ອມກັບຂໍ້ກຳນົດການອະນຸຍາດສະບັບພິມອອກ ຫຼື ຂໍ້ກຳນົດອື່ນໄປພ້ອມກັບການເສີມຊອບແວ, ການອັບເດດ, ແລະ ການບໍລິການໃດໜຶ່ງຜູ້ຜະລິດ ຫຼື ຜູ້ຕິດຕັ້ງ, ຫຼື Microsoft ຈັດໃຫ້ ແລະ ທີ່ທ່ານນຳໃຊ້), ແລະ ຂໍ້ກຳນົດທີ່ມີຢູ່ໃນລິ້ງຂອງເວັບທີ່ເຮັດເປັນລາຍການໄວ້ຢູ່ໃນຂໍ້ຕົກລົງນີ້ ແມ່ນເປັນທັງໝົດຂໍ້ຕົກລົງສຳລັບຊອບແວ ແລະ ການເສີມໃສ່, ການອັບເດດ, ແລະການບໍລິການດັ່ງກ່າວໃດໜຶ່ງ (ນອກຈາກວ່າງຜູ້ຜະລິດ ຫຼື ຜູ້ຕິດຕັ້ງ, ຫຼື Microsoft ໃຫ້ຂໍ້ກຳນົດອື່ນກັບການເສີມໃສ່, ການອັບເດດ, ຫຼື ການບໍລິການດັ່ງກ່າວ). ທ່ານສາມາດທວນຄືນເບິ່ງຂໍ້ຕົກລົງນີ້ໄດ້ຫຼັງຈາກຊອບແວຂອງທ່ານແລ່ນຢູ່ ໂດຍການໄປທີ່ (aka.ms/useterms) ຫຼື ໄປທີ່ ການຕັ້ງຄ່າ - ລະບົບ - ກ່ຽວກັບຢູ່ພາຍໃນຊອບແວ. ທ່ານຍັງສາມາດທວນຄືນເບິ່ງຂໍ້ກຳນົດຢູ່ໃນລິ້ງໃດໜຶ່ງໃນຂໍ້ຕົກລົງນີ້ໄດ້ ໂດຍການໄປທີ່ URL ໄປຫາແຖບທີ່ຢູ່ບຣາວເຊີ, ແລະ ທ່ານເຫັນດີປະຕິບັດແນວນັ້ນ. ທ່ານເຫັນດີວ່າ ທ່ານຈະອ່ານຂໍ້ກຳນົດກ່ອນນຳໃຊ້ຊອບແວ ຫຼື ການບໍລິການ, ລວມທັງຂໍ້ກຳນົດທີ່ມີໃນລິ້ງໃດໜຶ່ງ. ທ່ານເຂົ້າໃຈວ່າ ໂດຍການໃຊ້ຊອບແວ ແລະ ການບໍລິການ, ທ່ານຮັບຮອງຂໍ້ຕົກລົງນີ້ ແລະ ຂໍ້ກຳນົດທີ່ລິ້ງແລ້ວ. ຍັງມີລິ້ງທີ່ໃຫ້ຂໍ້ມູນເພີ່ມເຕີມຢູ່ໃນຂໍ້ຕົກລົງນີ້ອີກ. ລິ້ງທີ່ມີແຈ້ງການ ແລະ ຂໍ້ກຳນົດຜູກພັນໄດ້ແກ່:

· ຄຳໃຫ້ການຄວາມເປັນສ່ວນຕົວ Microsoft (aka.ms/privacy)

· ຂໍ້ຕົກລົງການບໍລິການ Microsoft (aka.ms/msa)

· ຂໍ້ກຳນົດການອະນຸຍາດ Adobe Flash Player (aka.ms/adobeflash)

**********************************************************************

**<u>ບໍ່ມີການຮັບປະກັນໃຫ້</u>**

ຊອບແວຢູ່ໃນອຸປະກອນຂອງທ່ານ (ລວມທັງແອັບ) ໄດ້ຮັບອະນຸຍາດໃຫ້ "ຕາມທີ່ເປັນ." ໃນລະດັບທີ່ກົດໝາຍທ້ອງຖິ່ນອະນຸຍາດໃຫ້ສູງສຸດ, ທ່ານຮັບຜິດຊອບຕໍ່ຄວາມສ່ຽງທັງໝົດກ່ຽວກັບຄຸນນະພາບ ແລະ ການປະຕິບັດງານຂອງຊອບແວ. ຖ້າພິສູດອອກມາວ່າ ມີຄວາມບົກພ່ອງ, ທ່ານຮັບຜິດຊອບຕໍ່ຄ່າໃຊ້ຈ່າຍທັງໝົດຂອງການບໍລິການ ຫຼື ການສ້ອມແປງທີ່ຈຳເປັນ. ຜູ້ຜະລິດອຸປະກອນ ຫຼື MICROSOFT ບໍ່ໃຫ້ການຮັບປະກັນ, ການຄໍ້າປະກັນ, ຫຼື ເງື່ອນໄຂຕ່າງໆສຳລັບຊອບແວໃດໆ. ໃນລະດັບທີ່ໄດ້ຮັບອະນຸຍາດພາຍໃຕ້ກົດໝາຍທ້ອງຖິ່ນຂອງທ່ານ,ຜູ້ຜະລິດອຸປະກອນ ແລະ MICROSOFT ບໍ່ລວມເອົາການ

ຮັບປະກັນ ແລະ ສະພາບທີ່ບໍ່ງບອກເຖິງທຸກອັນ, ລວມທັງບັນດາອັນທີ່ຊື້ຂາຍໄດ້, ຄວາມເໝາະສົມສຳລັບຈຸດປະສົງສະເພາະ ແລະການບໍ່ລະເມີດ. ທ່ານອາດຈະມີສິດຜູ້ຊົມໃຊ້ເພີ່ມເຕີມ ຫຼື ການຄໍ້າປະກັນຕາມຂໍ້ກຳນົດພາຍໃຕ້ກົດໝາຍທ້ອງຖິ່ນຂອງທ່ານ ທີ່ຂໍ້ກຳນົດເຫຼົ່ານີ້ບໍ່ສາມາດປ່ຽນແປງໄດ້.

ຖ້າກົດໝາຍທ້ອງຖິ່ນຂອງທ່ານບັງຄັບໃຊ້ການຮັບປະກັນ, ການຄໍ້າປະກັນ ຫຼື ເງື່ອນໄຂໃດໜຶ່ງ ແມ້ແຕ່ຂໍ້ຕົກລົງນີ້ບໍ່ມີ, ໄລຍະເວລາຂອງມັນແມ່ນຖືກຈຳກັດໃຫ້ແຕ່ 90 ວັນ ນັບຈາກເວລາທີ່ຜູ້ໃຊ້ຄົນທຳອິດໄດ້ຊອບແວມາ. ຖ້າຜູ້ຜະລິດ ຫຼື MICROSOFT ລະເມີດການຮັບປະກັນ, ການຄໍ້າປະກັນ, ຫຼືເງື່ອນໄຂດັ່ງກ່າວ, ຕາມການພິຈາລະນາໃນການເລືອກຂອງຜູ້ຜະລິດ ຫຼື MICROSOFT ທັງໝົດແລ້ວແມ່ນຈະໃຫ້ (I) ການສ້ອມແປງ ຫຼືປ່ຽນແທນຊອບແວໃຫ້ໂດຍບໍ່ເກັບຄ່າຫຍັງ, ຫຼື (II) ສົ່ງຊອບແວຄືນ (ຫຼື ຕາມການເລືອກຂອງອຸປະກອນທີ່ໄດ້ຕິດຕັ້ງຊອບແວມາກ່ອນ) ເພື່ອສົ່ງເງິນຈຳນວນທີ່ຈ່າຍໄປແລ້ວຄືນ, ຖ້າມີ. ນີ້ແມ່ນການແກ້ໄຂຂອງທ່ານເທົ່ານັ້ນຕໍ່ກັບການລະເມີດການຮັບປະກັນ, ການຄໍ້າປະກັນ, ຫຼື ເງື່ອນໄຂທີ່ກົດໝາຍທ້ອງຖິ່ນຂອງທ່ານບັງຄັບໃຊ້.

ໃນລະດັບທີ່ກົດໝາຍທ້ອງຖິ່ນຂອງທ່ານບໍ່ຫ້າມ, ຖ້າທ່ານມີພື້ນຖານໃດໜຶ່ງສຳລັບການກູ້ຄືນຄວາມເສຍຫາຍ, ທ່ານສາມາດກູ້ຄືນຈາກຜູ້ຜະລິດ ຫຼື MICROSOFT ໄດ້ແຕ່ຄວາມເສຍຫາຍໂດຍກົງຮອດຈຳນວນທີ່ທ່ານຈ່າຍໄປສຳລັບຊອບແວ (ຫຼືຮອດຈຳນວນ US$50 ຖ້າທ່ານໄດ້ຊອບແວມາໂດຍທີ່ບໍ່ມີການເກັບຄ່າ). ທ່ານຈະບໍ່ຂໍ ແລະ ສະຫຼະສິດທີ່ຈະຂໍການກູ້ຄືນຄວາມເສຍຫາຍອື່ນໃດໜຶ່ງ, ລວມທັງການເສຍຜົນກຳໄລ ແລະ ຄວາມເສຍຫາຍໂດຍກົງ, ເປັນຜົນຕາມມາ, ພິເສດ, ທາງອ້ອມ, ຫຼື ໂດຍບັງເອີນພາຍໃຕ້ສ່ວນໃດໜຶ່ງຂອງຂໍ້ຕົກລົງນີ້ ຫຼື ພາຍໃຕ້ທິດສະດີໃດໜຶ່ງ. ຂໍ້ຈຳກັດນີ້ນຳໃຊ້ກັບ (I) ອັນໃດໜຶ່ງທີ່ກ່ຽວຂ້ອງກັບຂໍ້ຕົກລົງນີ້, ຊອບແວ (ລວມທັງແອັບ), ອຸປະກອນ, ການບໍລິການ, ການສໍ້ໂກງ ຫຼື ການເສຍຂໍ້ມູນ, ຄວາມຫຼົ້ມເຫຼວຂອງການສົ່ງ ຫຼື ຮູບຂໍ້ມູນ, ເນື້ອໃນ (ລວມທັງລະຫັດ) ຢູ່ເທິງເວັບໄຊທ໌ອິນເຕີເນັດບຸກຄົນທີສາມ, ແລະ (II) ການຮຽກຮ້ອງຕໍ່ການລະເມີດສັນຍາ, ການຮັບປະກັນ, ການຄໍ້າປະກັນ, ຫຼືເງື່ອນໄຂ; ຄວາມຮັບຜິດຊອບອັນເຄັ່ງຄັດ; ການລະເລີຍ, ຫຼື ການທຳຄວາມເສຍຫາຍອື່ນ; ການລະເມີດລັດຖະບັນຍັດ ຫຼືກົດລະບຽບ; ການຮັ່ງມີຂຶ້ນຜິດປົກກະຕິ; ຫຼືພາຍໃຕ້ທິດສະດີອື່ນໃດໜຶ່ງ.

ຈະນຳໃຊ້ການຍົກເວັ້ນຄວາມເສຍຫາຍ ແລະ ຂໍ້ຈຳກັດການແກ້ໄຂຢູ່ໃນຂໍ້ຕົກລົງນີ້ ເຖິງແມ້ວ່າ ທ່ານບໍ່ໄດ້ຮັບການແກ້ໄຂໃດກໍ່ຕາມ (ຊອບແວແມ່ນໄດ້ຮັບອະນຸຍາດ “ຕາມທີ່ເປັນ”), ຖ້າການສ້ອມແປງ, ການປ່ຽນແທນ ຫຼືການສົ່ງເງິນຄືນ (ຖ້າເປັນທີ່ຮຽກຮ້ອງຕາມກົດໝາຍທ້ອງຖິ່ນຂອງທ່ານ) ບໍ່ຊົດເຊີຍເຕັມທີ່ໃຫ້ກັບທ່ານສຳລັບການສູນເສຍໃດໜຶ່ງ, ຖ້າຜູ້ຜະລິດ ຫຼື MICROSOFT ຮູ້ ຫຼືຄວນຈະຮູ້ກ່ຽວກັບຄວາມເປັນໄປໄດ້ຂອງຄວາມເສຍຫາຍ, ຫຼື ຖ້າການແກ້ໄຂບໍ່ເຮັດຕາມຈຸດປະສົງທີ່ຈຳເປັນຂອງມັນ.

ກວດເບິ່ງກັບຜູ້ຜະລິດອຸປະກອນຂອງທ່ານ ເພື່ອກຳນົດວ່າ ອຸປະກອນຂອງທ່ານຍັງຢູ່ໃນການຮັບປະກັນບໍ.